ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔ລມ/ປພຖຂ/໐໕໐ລ໑໐**

# ຖແລງການ

## ປະຕິເສດຄຳກ່າວຫາ ຂອງພັກຣັດ

ບໍ່ວ່າຍາມໃດ, ພັກຣັດ ກໍຕົວະຍົວະຫລອກລວງປະຊາຊົນ ໃຫ້ປາບປາມ, ສກັດກັ້ນແລະດັບສູນ ພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄື ປະຊາຊົນລາວທັງຊາດ, ທີ່ ທຳການຕໍ່ສູ້ຕາມແນວທາງ ສັນຕິວິທີວ່າ "**ເປັນພວກອິດທິກຳລັງປໍຣະປັກ**". ເປັນຂຸນເສິກສັກດີນາ, ເປັນຄົນບໍ່ດີ, ມີເປົ້າໝາຍ ຕ້ານພັກ ທຳລາຍຣັດ ດັ່ງນີ້ມາໂດຍຕລອດ.

ພວກເຮົາ, ບໍ່ແມ່ນອິດທິກຳລັງປໍຣະປັກ, ບໍ່ແມ່ນຂຸນເສິກສັກດີນາ, ບໍ່ແມ່ນປະຕິການເກາະຫ້ອຍ, ຕົກຫລົ່ນ ແລະກໍບໍ່ແມ່ນກຸ່ມຄົນບໍ່ດີ ຄືທີ່ໄດ້ກ່າວຫານັ້ນ ແຕ່ປະການໃດ!. –ແລະພວກເຮົາ ກໍບໍ່ແມ່ນຄົນຣັກຊາດ ປະເພດ "**ຫົວເປັນແກວ ແອວເປັນລາວ, ເທົ້າເປັນໄທຍ, ໃຈເປັນຈີນ ນັ້ນ ຢ່າງແນ່ນອນ**".

ພວກເຮົາແມ່ນຄົນລາວລຸ້ນໃໝ່, ໄດ້ທຳການຕໍ່ສູ້ ສືບຕໍ່ມູນເຊື້ອຣັກຊາດ ຈາກສົມເດັດເຈົ້າເພັຊຣາດ ທີ່ໄດ້ ນຳພາ ຂບວນການຕໍ່ສູ້ ຂອງລາວອິສຣະ ເພື່ອປົດປ່ອຍປະເທດຊາດ. ຢາກໃຫ້ຄົນລາວ ມີອິສຣະພາບ, ປະຊາທິ ປະໄຕ, ປະເທດຊາດ ຕ້ອງເປັນເອກຣາດ ແລະປະຊາຊົນລາວຕ້ອງມີຄວາມເປັນເອກພາບກັນ. ພວກເຮົາ ບໍ່ ຕ້ອງການ ໃຫ້ພັກຣັດ ສືບຕໍ່ສັນຍາມິຕພາບ ລາວ–ວຽດ ຂາຍປະເທດຊາດອີກຕໍ່ໄປ. ແລະພວກເຮົາ ກໍບໍ່ ຕ້ອງການໃຫ້ພັກຣັດ ມີການຈຳແນກ ຣະຫວ່າງຄົນລາວໃນກັບລາວນອກ; ເພາະຈະຢູ່ໃສ ກໍແມ່ນຄົນລາວດ້ວຍກັນ.

ພວກເຮົາເຊື່ອວ່າ "**ການແກ້ໄຂບັນຫາລາວ, ຕ້ອງແກ້ໄຂກັນຢ່າງສັນຕິວິທີ ຣະຫວ່າງ ລາວສອງຝ່າຍ ຕ້ອງແກ້ໄຂກັນ ດ້ວຍເຫດ ດ້ວຍຜົນ**". ພັກຣັດ ກໍຮູ້ຢູ່ແກ່ໃຈວ່າ, ບັນດາ ອ້າຍນ້ອງ ໃນຖັນແຖວ ທີ່ໄດ້ອອກທຳການຕໍ່ສູ້ໃນເມື່ອກ່ອນ ແລະພໍ່ແມ່ ລູກຫລານ ຂອງປະຊາຊົນ ທີ່ໄດ້ຂຸກເຊື່ອງເຂົ້າປາອາຫານ ໄປໃຫ້ ຜູ້ນຳການປະຕິວັດ ໃນສມັຍສົງຄາມນັ້ນ, ພວກເຂົາ ຍັງທຸກຍາກລຳບາກ ແລະໄດ້ຮັບຄວາມເດືອດຮ້ອນ ເຫລືອທີ່ສຸດ!.

35 ປີ ທີ່ພັກຣັດ ໄດ້ຂຶ້ນຄອງອຳນາດ, ໄດ້ສ້າງຄວາມຜິດຫວັງ ອັນໃຫຍ່ຫລວງ ໃຫ້ແກ່ພວກເຂົາ; ນອກຈາກ ບໍ່ໄດ້ເປັນໄປຕາມຈິດໃຈ ຂອງການຕໍ່ສູ້ ເພື່ອເຕົ້າໂຮມລາວທັງຊາດ ຕາມທິດເລັ່ງ ຂອງລາວ ອິສຣະແລ້ວ,ຍັງເຮັດໃຫ້ ພວກເຂົາ ໄດ້ຮັບຄວາມທຸກຍາກລຳບາກ ແລະໄດ້ຮັບຄວາມເດືອດຮ້ອນມາໂດຍຕລອດ. ປະຊາຊົນ ຍັງທຸກຍາກລຳບາກ, ຫາໄມ້ຈະປຸກເຮືອນກໍບໍ່ມີ, ຫາດິນເປັນຂອງຕົນເອງຈະສ້າງສາທຳມາຫາກິນກໍບໍ່ມີ. ຖືກບັງຄັບໃຫ້ຍົກຍ້າຍມາໂດຍຕລອດ. ຊີວິດການເປັນຢູ່ ບໍ່ມີຄວາມປອດພັຍ ແລະຮັບປະກັນ. ພັກຣັດ ບໍ່ໄດ້ເອົາໃຈໃສ່ ພັທນາຄົນ; ຈະໄປເວົ້າເຣື້ອງພັທນາ ປະເທດຊາດ ໄດ້ຢ່າງໃດ?.

ສ່ວນວ່າ ກຽດສັກສີຂອງຊາດ ແມ່ນບໍ່ມີເລີຍ! ຖືກຊາວໂລກກ່າວປະນາມ ມາໂດຍຕລອດ, ກ່ຽວກັບການລະເມີດຕໍ່ສິດທິຂອງພົລເມືອງ, ການປາບປາມນັກສາສນາ, ການກີດກັ້ນຂ່າວສານທີ່ຖືກຕ້ອງ. ເປັນຣັຖບານສໍ້ຣາດບັງຫລວງ,ຄ້າຢາເສບຕິດ, ຄ້າໄມ້ເຖື່ອນ, ປາບປາມປະຊາຊົນ, ສານຍຸຕິທັມ...ປະຊາຊົນ ກໍເພິ່ງພາອາສັຍບໍ່ໄດ້. ຍ້ອນຖືກພັກຣັດຄວບຄຸມແລະແຊກແຊງ. ປະຊາຊົນ ບໍ່ມີສິດປ່ຽນແປງຣັຖບານຂອງຕົນໄດ້. ເວົ້າລວມແລ້ວ, ກໍຄື ເປັນຣັຖບານ ທີ່ຕ້ານຊາດ, ຕ້ານປະຊາຊົນ ແລະຕ້ານສາກົນນັ້ນເອງ!.

ພວກເຮົາ ຮຽກຮ້ອງມາຍັງພັກຣັດ ຈົ່ງໄດ້ຕັດສິນໃຈ ຢ່າງກ້າຫານ, ອອກມາໂອ້ລົມກັບພວກເຮົາ. ບໍ່ຄວນຈະເຮັດໃຫ້ ປະເທດຊາດ ຕ້ອງໄດ້ຮັບຄວາມເສັຽຫາຍ ແລະປະຊາຊົນ ຕ້ອງໄດ້ຮັບຄວາມເດືອດຮ້ອນ ໄປຫລາຍກວ່ານີ້ຕື່ມອີກ. ການແກ້ໄຂບັນຫາລາວ ຕາມແນວທາງສັນຕິວິທີ ດ້ວຍການອອກມາ ໂອ້ລົມກັນ ຢ່າງສົມເຫດສົມຜົນ, ມັນກໍເປັນການຖືກຕ້ອງທີ່ສຸດແລ້ວ! ເພາະມັນແຕກຕ່າງ ກັບການແກ້ໄຂແບບສັ່ງຊາກຳລັງ ຢ່າງສິ້ນເຊີງ! ຊຶ່ງມີແຕ່ນຳຄວາມຫາຍະນະ ມາຊ້ຳເຕີມປະເທດຊາດຕື່ມອີກ; **ແຕ່ຖ້າພັກຣັດ ຕ້ອງການ ແກ້ໄຂບັນຫາລາວດ້ວຍກຳລັງ, ກໍໃຫ້ພັກຣັດ ສົ່ງໜັງສືຢ່າງເປັນທາງການ ໄປໃຫ້ພວກເຮົາ, ເພື່ອຈະໄດ້ແຈ້ງ ໃຫ້ອົງການຈັດຕັ້ງສາກົນຮັບຮູ້ນຳ ວ່າ *"ພັກຣັດບໍ່ຕ້ອງການແກ້ໄຂບັນຫາລາວແບບສັນຕິວິທີ ຕາມທີ່ສາກົນ ໄດ້ກຳນົດໄວ້"* ແລະ ຕາມທີ່ພັກຣັດ ໄດ້ຍອມຮັບເຊັນຮ່ວມ ວ່າ "*ທຸກໆບັນຫາ ກໍຣະນີຜິດພາດ ຕ້ອງແກ້ໄຂກັນ ຢ່າງສັນຕິ*".**

ສຳລັບພວກເຮົາ, ແມ່ນພ້ອມແລ້ວທີ່ຈະຕອບສນອງໃນທຸກໆກໍຣະນີ. ແຕ່ຢ່າລືມວ່າ, ຜົນສະທ້ອນແນວບໍ່ດີ ທີ່ຈະຕິດຕາມມານັ້ນ, ພັກຣັດ ຕ້ອງເປັນຜູ້ຮັບຜິດຊອບ ແຕ່ຝ່າຍດຽວຢ່າງຫລີກລ້ຽງບໍ່ໄດ້ເປັນ ເດັດຂາດ.

ປະຊາຊົນມີໄຊຍ ເສຣີປະຊາທິປະໄຕອົງອາດ ຊາດລາວຈົ່ງຈເຣີນ.

ຂໍຂອບໃຈ.

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ຫ້ອງການປະທານພັກ**

**ອາຈານ ສົມນຶກ ຟອງສູວັນ**

**ວັນທີ ໕ ພຶສພາ ໒໐໑໐.**